ກ່ຽວກັບ

ລະບຽບການເງິນ ແລະການຄຸ້ມຄອງການນຳໃຊ້ແຫຼ່ງທຶນຊ່ວຍເຫຼືອລ້ຳ ຈາກ ລັດຖະບານຫວຽດນາມ ໃຫ້ແກ່ລັດຖະບານລາວ

ລັດຖະບານ ສສ ຫວຽດນາມ (ຕໍ່ຈາກນີ້ໄປເອີ້ນວ່າ ລັດຖະບານຫວຽດນາມ) ແລະ ລັດຖະບານ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ (ຕໍ່ຈາກນີ້ໄປເອີ້ນວ່າ ລັດຖະບານລາວ), ຕໍ່ໄປນີ້ເອີ້ນລວມວ່າສອງ ຝ່າຍ;

ເພື່ອຮັບປະກັນການຄຸ້ມຄອງ ແລະນຳໃຊ້ທຶນຊ່ວຍເຫຼືອໃຫ້ມີປະສິດທິຜົນຂອງລັດຖະບານ ສສ ຫວຽດນາມ ມອບໃຫ້ ລັດຖະບານ ສປປ ລາວ, ເພື່ອຮັບປະກັນຊຸກຍູ້ ແລະ ເພີ່ມທະວີສາຍພົວພັນການຮ່ວມມື ລະຫວ່າງສອງປະເທດ, ສອງຝ່າຍໄດ້ຕົກລົງ ດັ່ງລຸ່ມນີ້ :

ພາກທີ I

ຂໍ້ກຳນົດລວມ

ມາດຕາ 1 ອະທິບາຍຄຳສັບ

ຄຳສັບຕ່າງໆທີ່ໄດ້ນຳໃຊ້ໃນຂໍ້ຕົກລົງສະບັບນີ້ມີຄວາມໝາຍ ດັ່ງນີ້:

1. "ທຶນຊ່ວຍເຫຼືອ" ໝາຍເຖິງທຶນຊ່ວຍເຫຼືອລ້ຳຈາກລັດຖະບານຫວຽດນາມມອບໃຫ້ລັດຖະບານລາວ;
2. "ເຈົ້າຂອງໂຄງການຝ່າຍລາວ" ໝາຍເຖິງ ບັນດາກະຊວງ, ທ້ອງຖິ່ນ, ພາກສ່ວນທີ່ໄດ້ຮັບການມອບໝ ายຄວາມຮັບຜິດຊອບຈາກລັດຖະບານລາວໃຫ້ປະສານສົມທົບກັບເຈົ້າຂອງໂຄງການຝ່າຍ ຫວຽດນາມ ຈັດຕັ້ງປະຕິບັດ, ຮັບ ແລະ ຄຸ້ມຄອງນຳໃຊ້ທຶນຊ່ວຍເຫຼືອຂອງລັດຖະບານຫວຽດນາມ ມອບໃຫ້ລັດຖະບານລາວ;

3. "ເຈົ້າຂອງໂຄງການຝ່າຍຫວຽດນາມ" ໝາຍເຖິງ ບັນດາກະຊວງ, ທ້ອງຖິ່ນ, ພາກສ່ວນທີ່ໄດ້ຮັບມອບໝາຍຈາກລັດຖະບານຫວຽດນາມໃຫ້ປະສານສົມທົບກັບເຈົ້າຂອງໂຄງການຝ່າຍລາວຈັດຕັ້ງປະຕິບັດບັນດາໂຄງການທີ່ນຳໃຊ້ທຶນຊ່ວຍເຫຼືອຈາກລັດຖະບານຫວຽດນາມ;
4. "ນັກສຶກສາລາວ" ໝາຍເຖິງພະນັກງານ, ນັກຮຽນ, ນັກສຶກສາລາວ ໄປຮ່ຳຮຽນຕາມສັນຍາຮ່ວມມືໃນແຕ່ລະປີ ລະຫວ່າງ ລັດຖະບານຫວຽດນາມ ແລະ ລັດຖະບານລາວ.

ມາດຕາ 2 ຂົງເຂດທີ່ນຳໃຊ້ທຶນຊ່ວຍເຫຼືອ

ທຶນຊ່ວຍເຫຼືອແມ່ນນຳໃຊ້ເຂົ້າໃນບັນດາຂົງເຂດ ດັ່ງລຸ່ມນີ້:

1. ບັນດາໂຄງການກໍ່ສ້າງຢູ່ລາວ;
2. ການກໍ່ສ້າງ, ບຳລຸງພະນັກງານ, ນັກຮຽນ, ນັກສຶກສາລາວຮ່ຳຮຽນຢູ່ ຫວຽດນາມ ຫຼື ຮ່ຳຮຽນ ຢູ່ ລາວ;
3. ບັນດາໂຄງການໃຫ້ການສະໜັບສະໜຸນດ້ານວິຊາການເພື່ອຍົກສູງຄວາມອາດສາມາດ ແລະ ປະສິດທິພາບ;
4. ບັນດາຂະແໜງການອື່ນໆຕາມການຕົກລົງຂອງລັດຖະບານສອງຝ່າຍ.

ມາດຕາ 3 ການຈັດສັນ, ຄຸ້ມຄອງ ແລະນຳໃຊ້ທຶນຊ່ວຍເຫຼືອ

1. ທຶນຊ່ວຍເຫຼືອຂອງລັດຖະບານຫວຽດນາມມອບໃຫ້ລັດຖະບານລາວຕາມສັນຍາຮ່ວມມືໃນໄລຍະ 5 ປີ ແລະ ສັນຍາຮ່ວມມືແຕ່ລະປີ, ຕ້ອງສອດຄ່ອງກັບບຸລິມະສິດການຮ່ວມມືຂອງລັດຖະບານ ຫວຽດນາມ ແລະ ລາວ ໃນແຕ່ລະໄລຍະ ແລະ ເງື່ອນໄຂງົບປະມານຂອງລັດຖະບານຫວຽດນາມ;
2. ການຄຸ້ມຄອງ, ນຳໃຊ້ທຶນຊ່ວຍເຫຼືອຕ້ອງປະຕິບັດຕາມກົດໝາຍ, ລະບຽບການຂອງສອງຝ່າຍ ແລະ ຮັບປະກັນຄວາມໂປ່ງໃສ ມີປະສິດທິພາບ ແລະ ກວດສອບໄດ້;
3. ຝ່າຍລາວຕ້ອງຮັບປະກັນການຈັດສັນທຶນສົມທົບແລະງົບປະມານໃນການສ້ອມແປງ ແລະ ບຳລຸງຮັກສາໂຄງການໃຫ້ພຽງພໍ ແລະ ຄົບຖ້ວນຕາມທີ່ລະບຸໃນເອກະສານໂຄງການທີ່ໄດ້ຖືກຮັບຮອງ ເພື່ອຮັບປະກັນຜົນສຳເລັດ ແລະ ຄວາມຍືນຍົງຂອງໂຄງການ;
4. ບັນດາຮ່ວງລາຍຈ່າຍທີ່ບໍ່ສາມາດນຳໃຊ້ທຶນຊ່ວຍເຫຼືອ:
   4.1 ພາສີ, ອາກອນ ແລະ ຄ່າທຳນຽມຕ່າງໆໃນການປະຕິບັດໂຄງການຊ່ວຍເຫຼືອ;
   4.2 ຄ່າຊົດເຊີຍ, ຄ່າຍົກຍ້າຍສິ່ງກີດຂວາງໃນພື້ນທີ່ຂອງໂຄງການ;
   4.3 ບັນດາຮ່ວງລາຍຈ່າຍນຳໃຊ້ໃນການຄຸ້ມຄອງໂຄງການຂອງຝ່າຍລາວເຊັ່ນ: ລາຍຈ່າຍບໍລິຫານ, ເງິນເດືອນ-ນະໂຍບາຍ ແລະ ເງິນອຸດໜູນອື່ນໆ (ຖ້າມີ);
   4.4 ຄ່າໃຊ້ຈ່າຍບໍລິຫານ, ຄ່າບຳລຸງສ້ອມແປງ;
   4.5 ບັນດາຂົງເຂດອື່ນຕາມການຕົກລົງຂອງສອງລັດຖະບານ;

5. ທຶນຊ່ວຍເຫຼືອຂອງລັດຖະບານຫວຽດນາມ ທີ່ມອບໃຫ້ລັດຖະບານລາວເປັນຜູ້ຮັບຜິດຊອບຈັດຕັ້ງປະຕິບັດ ແມ່ນນຳໃຊ້ລະບຽບການສະເພາະທີ່ສອງລັດຖະບານທີ່ໄດ້ເຊັນຂໍ້ຕົກລົງຮ່ວມກັນ.

ມາດຕາ 4 ການຈັດສັນທຶນສຳລັບສັນຍາຮ່ວມມື 5 ປີ ແລະສັນຍາຮ່ວມມືປະຈຳປີ

1. ການຈັດສັນທຶນຊ່ວຍເຫຼືອໃນສັນຍາຮ່ວມມື 5 ປີ

1.1 ການຈັດສັນທຶນຊ່ວຍເຫຼືອໃນສັນຍາຮ່ວມມື 5 ປີ ຕ້ອງໃຫ້ສອດຄ່ອງກັບ ກົດໝາຍງົບປະມານ ແລະແຜນພັດທະນາເສດຖະກິດ - ສັງຄົມຂອງຝ່າຍຫວຽດນາມ ແລະ ລາວໃນໄລຍະ 5 ປີ;

1.2 ອີງໃສ່ສະພາບການຈັດຕັ້ງປະຕິບັດທຶນຊ່ວຍເຫຼືອຂອງສັນຍາຮ່ວມມື 5 ປີ ຜ່ານມາ ແລະ ໃຫ້ບຸລິມະສິດການຮ່ວມມື 5 ປີ ຕໍ່ໜ້າລະຫວ່າງລັດຖະບານຫວຽດນາມ ແລະ ລາວ, ພ້ອມທັງ. ອີງໃສ່ເງື່ອນໄຂງົບປະມານຂອງຝ່າຍຫວຽດນາມ ແລະ ຂໍ້ຕົກລົງຂອງການນຳຂັ້ນສູງຂອງສອງຝ່າຍ;

1.3 ກະຊວງການເງິນ ສສ ຫວຽດນາມ ປະສານສົມທົບ ກະຊວງການເງິນ ສປປ ລາວ ປະເມີນຜົນຕີລາຄາການຈັດຕັ້ງປະຕິບັດທຶນຊ່ວຍເຫຼືອຈາກລັດຖະບານຫວຽດນາມ ມອບໃຫ້ລັດຖະບານລາວໃນໄລຍະ 5 ປີ ຜ່ານມາ ແລະ ຄາດຄະເນທຶນຊ່ວຍເຫຼືອໃນໄລຍະ 5 ປີ ຕໍ່ໜ້າ ແລ້ວລາຍງານລັດຖະບານຂອງແຕ່ລະຝ່າຍ ເພື່ອເປັນບ່ອນອີງໃນການຈັດສັນທຶນຊ່ວຍເຫຼືອໃນສັນຍາຮ່ວມມື 5 ປີ.

2. ການຈັດສັນທຶນຊ່ວຍເຫຼືອໃນສັນຍາຮ່ວມມືປະຈຳປີ

2.1 ການຈັດສັນທຶນຊ່ວຍເຫຼືອໃນສັນຍາຮ່ວມມືປະຈຳປີແມ່ນອີງໃສ່ສັນຍາຮ່ວມມື 5 ປີ; ຜົນການຈັດຕັ້ງປະຕິບັດທຶນຊ່ວຍເຫຼືອໃນປີກ່ອນ ແລະ ເງື່ອນໄຂດ້ານງົບປະມານຂອງລັດຖະບານຫວຽດນາມ;

2.2 ກະຊວງການເງິນ ຂອງແຕ່ລະຝ່າຍປະເມີນຜົນການຈັດຕັ້ງປະຕິບັດທຶນຊ່ວຍເຫຼືອຂອງລັດຖະບານຫວຽດນາມ, ທຶນສົມທົບຂອງລັດຖະບານລາວໃນປີກ່ອນ; ຄາດຄະເນຈຳນວນທຶນຊ່ວຍເຫຼືອທັງໝົດ ແລະ ທຶນສົມທົບໃນປີເພື່ອເປັນບ່ອນອີງໃນການລາຍງານລັດຖະບານຂອງແຕ່ລະຝ່າຍ ເພື່ອພິຈາລະນາຈັດສັນທຶນຊ່ວຍເຫຼືອກໍ່ຄືການຈັດສັນທຶນສົມທົບ;

2.3 ການຈັດສັນທຶນຊ່ວຍເຫຼືອແມ່ນໃຫ້ບຸລິມະສິດວຽກງານການສຶກສາເຊັ່ນ: ໃນກໍລະນີມີຄວາມຮຽກຮ້ອງຕ້ອງການໃນວຽກງານສຶກສາໃດໜຶ່ງແບບກະທັນຫັນເຊິ່ງບໍ່ໄດ້ກຳນົດໃນສັນຍາຮ່ວມມືປະຈຳປີ ແມ່ນນາຍົກລັດຖະມົນຕີຂອງສອງຝ່າຍຈະພິຈາລະນາຮ່ວມກັນໃນການຈັດສັນທຶນໃຫ້ແກ່ວຽກງານດັ່ງກ່າວ. ພ້ອມນີ້, ການຈັດສັນທຶນຊ່ວຍເຫຼືອກໍ່ອີງໃສ່ບັນດາໂຄງການທີ່ຈະສຳເລັດໃນປີ ແລະ ໂຄງການທີ່ຈະສືບຕໍ່ຈັດຕັ້ງປະຕິບັດໃນສັນຍາຮ່ວມມືປະຈຳປີ.

3. ການໂອນທຶນຊ່ວຍເຫຼືອໃນແຕ່ລະປີ

ທຶນຊ່ວຍເຫຼືອທີ່ບໍ່ໄດ້ຮັບການເບີກຈ່າຍໝົດໃນປີຜ່ານມາແມ່ນໃຫ້ໂອນ ມາສືບຕໍ່ນຳໃຊ້ໃນປີຕໍ່ ມາເຊິ່ງແມ່ນການປະຕິບັດຕາມຂໍ້ກຳນົດຂອງ ກົດໝາຍວ່າດ້ວຍ ການລົງທຶນສາທາລະນະ ແລະ ກົດ ໝາຍງົບປະມານ ຂອງຫວຽດນາມ.

ພາກທີ II

ການຄຸ້ມຄອງທຶນຊ່ວຍເຫຼືອໃນວຽກງານການສຶກສາ

ມາດຕາ 5 ກຳນົດທຶນການສຶກສາ ແລະ ແຜນລາຍຈ່າຍໃນຂະແໜງສຶກສາ

1. ກ່ອນວັນທີ 20 ເດືອນກໍລະກົດ ຂອງແຕ່ລະປີ, ກະຊວງສຶກສາ ແລະ ກໍ່ສ້າງ, ກະຊວງປ້ອງກັນ ປະເທດ, ກະຊວງປ້ອງກັນຄວາມສະຫງົບ ຂອງຝ່າຍຫວຽດນາມຕ້ອງແລກປ່ຽນ ເພື່ອຄວາມເປັນ ເອກະພາບຮ່ວມມືກັນກັບບັນດາຂະແໜງການທີ່ກ່ຽວຂ້ອງຂອງຝ່າຍລາວ ກ່ຽວກັບການກຳນົດທຶນ ການສຶກສາ ແລະ ຂະແໜງການຮຽນໃນປີຕໍ່ໄປ:

   1.1 ການຮຽນພາສາຫວຽດຢູ່ ສປປ ລາວ;

   1.2 ການຮຽນໄລຍະຍາວຕາມຂັ້ນ: ຊັ້ນສູງ, ປະລິນຍາຕີ, ປະລິຍາໂທ, ປະລິນຍາເອກ ຢູ່ ສສ ຫວຽດນາມ;

   1.3 ການຮຽນ, ການຝຶກອົບຮົມໄລຍະສັ້ນຢູ່ ຫວຽດນາມ.

2. ບົນພື້ນຖານການກຳນົດທຶນການສຶກສາໃໝ່, ຈຳນວນນັກສຶກສາລາວກຳລັງຮຽນຢູ່ ຫວຽດນາມ ໂອນເປັນນັກສຶກສາສືບຕໍ່ຮຽນໃນປີຕໍ່ໄປ ແລະ ການກຳນົດລາຍຈ່າຍໃນວຽກງານການສຶກສາ, ກະຊວງສຶກສາ ແລະ ກໍ່ສ້າງ ຫວຽດນາມ, ກະຊວງປ້ອງກັນປະເທດ ຫວຽດນາມ, ກະຊວງປ້ອງກັນ ຄວາມສະຫງົບຫວຽດນາມ ແລະ ກະຊວງອື່ນໆ, ຂະແໜງການຢູ່ສູນກາງ, ທ້ອງຖິ່ນ ຂຶ້ນແຜນລາຍ ຈ່າຍໃນຂະແໜງສຶກສາແລ້ວ ນຳສົ່ງໃຫ້ ກະຊວງແຜນການ ແລະ ການລົງທຶນ, ກະຊວງການເງິນ ຫວຽດນາມ;

3. ບົນພື້ນຖານທຶນການຊ່ວຍເຫຼືອທັງໝົດທີ່ສະພາໄດ້ອະນຸມັດຮັບຮອງ ກະຊວງແຜນການ ແລະ ການ ລົງທຶນ ສັງລວມເຂົ້າເນື້ອໃນອາລະກອງປະຊຸມລັດຖະບານໃນແຕ່ລະປີ ເພື່ອລາຍງານນາຍົກ ລັດຖະມົນຕີຂອງສອງຝ່າຍພິຈາລະນາການອະນຸມັດ;

4. ກະຊວງແຜນການ ແລະ ການລົງທຶນ ຫວຽດນາມ ແຈ້ງຈຳນວນທຶນການສຶກສາ, ແຜນລາຍຈ່າຍທຶນ ຊ່ວຍເຫຼືອໃນຂະແໜງສຶກສາໃຫ້ບັນດາກະຊວງ, ຂະແໜງການຂັ້ນສູນກາງ ແລະທ້ອງຖິ່ນ. ພ້ອມທັງ , ນຳສົ່ງແຜນລາຍຈ່າຍຂອງທຶນຊ່ວຍເຫຼືອໃນຂະແໜງສຶກສາ ໃຫ້ ກະຊວງການເງິນ ພາຍໃນກຳນົດ 30 ວັນ ພາຍຫຼັງນາຍົກລັດຖະມົນຕີຫວຽດນາມຮັບຮອງຜົນກອງປະຊຸມຄະນະກຳມະການຮ່ວມມື ລະຫວ່າງລັດຖະບານລາວ ແລະຫວຽດນາມ ;

5. ໃນກໍລະນີມີຄວາມຕ້ອງການໃນວຽກງານການສຶກສາແບບກະທັນຫັນ ທີ່ບໍ່ໄດ້ກຳນົດໃນສັນຍາການຮ່ວມມືປະຈຳປີ, ກະຊວງສຶກສາ ແລະ ກໍ່ສ້າງ, ກະຊວງປ້ອງກັນປະເທດ, ກະຊວງປ້ອງກັນຄວາມສະຫງົບ, ບັນດາກະຊວງ, ຂະແໜງການຂັ້ນສູນກາງ, ທ້ອງຖິ່ນຂອງຝ່າຍຫວຽດນາມປຶກສາຫາລືຮ່ວມກັນກັບບັນດາຂະແໜງການທີ່ກ່ຽວຂ້ອງຂອງຝ່າຍລາວ. ຫຼັງຈາກນັ້ນນຳສະເໜີ ກະຊວງແຜນການ ແລະ ການລົງທຶນ ເພື່ອສັງລວມລາຍງານນາຍົກລັດຖະມົນຕີຫວຽດນາມ ພິຈາລະນາອະນຸມັດການຈັດສັນທຶນຊ່ວຍເຫຼືອພາຍໃນຂອບງົບປະມານ ທີ່ໄດ້ຮັບການອະນຸມັດໃນວຽກງານສຶກສາ.

ມາດຕາ 6 ການຈັດແບ່ງທຶນການສຶກສາ

1. ອີງໃສ່ຂໍ້ຕົກລົງຮ່ວມມືປະຈຳປີທີ່ສອງຝ່າຍລົງລາຍເຊັ່ນ:
   1.1 ກະຊວງສຶກສາ ແລະ ກໍ່ສ້າງຫວຽດນາມ ແຈ້ງການຈຳນວນທຶນການສຶກສາໃຫ້ບັນດາກະຊວງ, ຂະແໜງການ, ອົງການຈັດຕັ້ງໃນຂັ້ນສູນກາງ ແລະ ທ້ອງຖິ່ນຂອງຫວຽດນາມ (ບໍ່ລວມທຶນການສຶກສາຂອງກະຊວງປ້ອງກັນປະເທດ ແລະ ກະຊວງປ້ອງກັນຄວາມສະຫງົບ);
   1.2 ສຳລັບຝ່າຍລາວ: ແຈ້ງໃຫ້ບັນດາກະຊວງ, ຂະແໜງການ, ອົງການຈັດຕັ້ງໃນຂັ້ນສູນກາງຂອງຝ່າຍລາວ ກ່ຽວກັບການກຳນົດທຶນການສຶກສາ ແລະ ຄວາມຮັບຜິດຊອບທີ່ໄດ້ກຳນົດໄວ້ໃນຂໍ້ທີ່ 1, ມາດຕາ 5;
2. ອີງໃສ່ຕາມການແຈ້ງຈຳນວນທຶນການສຶກສາຂອງກະຊວງສຶກສາ ແລະ ກໍ່ສ້າງຫວຽດນາມ, ກະຊວງສຶກສາທິການ ແລະ ກິລາ ຂອງລາວ ແຈ້ງການທຶນການສຶກສາໃຫ້ບັນດາກະຊວງ, ຂະແໜງ ການຢູ່ທ້ອງຖິ່ນຮັບຊາບ ແລະ ປະສານສົມທົບກັນຈັດຕັ້ງຄັດເລືອກນັກສຶກສາຕາມລະບຽບການ ເພື່ອຮັບປະກັນຄຸນນະພາບ ແລະ ມາດຕະຖານທີ່ກຳນົດ.

ມາດຕາ 7 ງົບປະມານຈັດຕັ້ງການຮຽນການສອນພາສາຫວຽດນາມ ຢູ່ ລາວ

1. ກະຊວງການເງິນຫວຽດນາມ ໂອນງົບປະມານຈັດຕັ້ງການຮຽນການສອນພາສາຫວຽດ ໃຫ້ກະຊວງສຶກສາທິການ ແລະ ກິລາຝ່າຍລາວ ເພື່ອນຳໃຊ້ເຂົ້າໃນກິດຈະກຳຕ່າງໆ ພ້ອມທັງສະຫຼຸບລາຍຈ່າຍປີກ່ອນໜ້ານັ້ນໃຫ້ຝ່າຍຫວຽດນາມ;
2. ການຄຸ້ມຄອງນຳໃຊ້ທຶນການສຶກສາ ແລະ ສະຫຼຸບຄ່າໃຊ້ຈ່າຍການສຶກສາ:
   2.1 ກະຊວງສຶກສາທິການ ແລະ ກິລາ ລາວ ຈັດຕັ້ງການຮຽນການສອນພາສາຫວຽດໃຫ້ນັກສຶກສາ ແລະ ເບີກຈ່າຍເງິນບໍລິຫານ, ເງິນຄ່າສິດສອນ, ເບ້ຍລ້ຽງ ແລະ ເງິນຈັດກິດຈະກຳອີງຕາມລະບຽບການຂອງລາວ;
   2.2 ກ່ອນວັນທີ 31 ທັນວາ ຂອງແຕ່ລະປີ, ກະຊວງສຶກສາທິການ ແລະ ກິລາລາວ ຕ້ອງລາຍງານສະພາບການນຳໃຊ້ທຶນຊ່ວຍເຫຼືອໃນການສອນພາສາຫວຽດ ໃຫ້ແກ່ກະຊວງການເງິນ ແລະ ກະຊວງສຶກສາ ແລະ ກໍ່ສ້າງຂອງຫວຽດນາມ ເພື່ອສາມາດຕິດຕາມສະພາບການຈັດຕັ້ງປະຕິບັດການຮຽນການສອນຂອງຝ່າຍລາວ.

ພາກທີ III
ການຄຸ້ມຄອງທຶນຊ່ວຍເຫຼືອສຳລັບໂຄງການ

ມາດຕາ 8 ສະເໜີບົດໂຄງການທີ່ນຳໃຊ້ທຶນຊ່ວຍເຫຼືອ

1. ສະເໜີຂໍໂຄງການ:

1.1 ໃນກໍລະນີຝ່າຍຫວຽດນາມເປັນຜູ້ສະເໜີຂໍໂຄງການ

- ອີງໃສ່ສັນຍາຮ່ວມມື 5 ປີ, ສັນຍາຮ່ວມມືປະຈຳປີຂອງສອງລັດຖະບານ, ກະຊວງ, ອົງການຈັດຕັ້ງຂັ້ນສູນກາງ ແລະ ທ້ອງຖິ່ນຫວຽດນາມ ເອກະພາບສ້າງບົດສະເໜີໂຄງການລົງທຶນກໍ່ສ້າງທີ່ນຳໃຊ້ທຶນຊ່ວຍເຫຼືອ ເພື່ອລາຍງານຕໍ່ຄະນະກຳມະການຮ່ວມມືລາວ - ຫວຽດນາມ ລາຍງານລັດຖະບານລາວພິຈາລະນາອະນຸມັດ;

- ບົນພື້ນຖານການອະນຸມັດຮັບເອົາບົດສະເໜີໂຄງການລົງທຶນກໍ່ສ້າງທີ່ນຳໃຊ້ທຶນຊ່ວຍເຫຼືອຂອງລັດຖະບານລາວ, ຄະນະກຳມະການຮ່ວມມື ລາວ - ຫວຽດ ສົ່ງບົດສະເໜີໂຄງການໃຫ້ຄະນະກຳມະການຮ່ວມມືຫວຽດ -ລາວ 90 ວັນ ກ່ອນມື້ເປີດກອງປະຊຸມຄະນະກຳມະການຮ່ວມມືຂອງສອງລັດຖະບານລາວ ແລະ ຫວຽດນາມ.;

- ກະຊວງແຜນການ ແລະການລົງທຶນຫວຽດນາມ ຂໍຄຳເຫັນຈາກບັນດາຂະແໜງການທີ່ກ່ຽວຂ້ອງ (ກະຊວງການເງິນ, ຫ້ອງການອຳການລັດຖະບານ, ພາກສ່ວນຄຸ້ມຄອງຂະແໜງການທີ່ກ່ຽວຂ້ອງ) ເພື່ອລາຍງານນາຍົກລັດຖະມົນຕີຫວຽດນາມ ພິຈາລະນາອະນຸມັດ ເພື່ອນຳສະເໜີແລກປ່ຽນໃນກອງປະຊຸມຮ່ວມມືທະວິພາຄີລະຫວ່າງສອງລັດຖະບານ ລາວ - ຫວຽດນາມ.

1.2 ໃນກໍລະນີ, ຝ່າຍລາວເປັນຜູ້ສະເໜີຂໍໂຄງການ:

- ກຳນົດເວລາບໍ່ໃຫ້ກາຍ 90 ວັນ ກ່ອນມື້ເປີດກອງປະຊຸມຮ່ວມມືທະວິພາຄີ ລະຫວ່າງສອງລັດຖະບານ ລາວ - ຫວຽດນາມ, ຄະນະກຳມະການຮ່ວມມືລາວ - ຫວຽດນາມ ປະກອບຄຳເຫັນສົ່ງບົດສະເໜີໂຄງການ ຫາ ຄະນະກຳມະການຮ່ວມມືລາວ - ຫວຽດນາມ;

- ກະຊວງແຜນການ ແລະ ການລົງທຶນ ຫວຽດນາມ ຂໍຄຳເຫັນຈາກຂະແໜງການທີ່ກ່ຽວຂ້ອງ (ເຊັ່ນ : ກະຊວງການເງິນ, ຫ້ອງວ່າການລັດຖະບານ, ພາກສ່ວນຄຸ້ມຄອງດ້ານວິຊາການທີ່ກ່ຽວຂ້ອງ) ເພື່ອລາຍງານຕໍ່ລັດຖະບານຫວຽດນາມເພື່ອມອບໃຫ້ຂະແໜງການທີ່ກ່ຽວຂ້ອງຂອງຫວຽດນາມ ເປັນເຈົ້າການປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງຂອງຝ່າຍລາວ ສ້າງບົດສະເໜີຂໍໂຄງການທີ່ນຳໃຊ້ທຶນຊ່ວຍເຫຼືອ.

2. ບົດສະເໜີຂໍໂຄງການທີ່ນຳໃຊ້ທຶນຊ່ວຍເຫຼືອຕ້ອງປະກອບມີບັນດາເນື້ອໃນ ດັ່ງນີ້:

2.1 ຄວາມຈຳເປັນໃນການລົງທຶນກໍ່ສ້າງ, ບັນດາເງື່ອນໄຂໃນການຈັດຕັ້ງປະຕິບັດ, ປະເມີນຜົນໂຄງການຕໍ່ແຜນພັດທະນາເສດຖະກິດ - ສັງຄົມ ຢຸ່ລາວ;

2.2 ຊື່ໂຄງການ ແລະ ເຈົ້າຂອງໂຄງການຝ່າຍລາວແລະຝ່າຍຫວຽດນາມ;

2.3 ຈຸດປະສົງ, ຂະໜາດ, ສະຖານທີ່ ແລະຂອບເຂດການລົງທຶນ;

2.4 ມູນຄ່າໂຄງການທັງໝົດ ແລະ ແຫຼ່ງທຶນ (ທຶນຊ່ວຍເຫຼືອຈາກລັດຖະບານຫວຽດນາມ, ທຶນສົມທົບຂອງລັດຖະບານລາວ).

2.5 ຄາດຄະເນແຜນການຈັດຕັ້ງປະຕິບັດໂຄງການໃຫ້ສອດຄ່ອງກັບເງື່ອນໄຂຕົວຈິງ ແລະ ຄວາມອາດສາມາດຕອບສະໜອງທຶນຂອງສອງຝ່າຍ.

2.6 ກຳນົດລາຍຈ່າຍທີ່ຕິດພັນກັບການຈັດຕັ້ງປະຕິບັດໂຄງການ ແລະ ຄ່າສ້ອມແປງພາຍຫຼັງສຳເລັດໂຄງການ.

2.7 ວິໄຈ, ປະເມີນຜົນກະທົບຕໍ່ສິ່ງແວດລ້ອມ, ສັງຄົມ; ກຳນົດຜົນໄດ້ຮັບໃນການລົງທຶນຕໍ່ເສດຖະກິດ - ສັງຄົມ.

2.8 ກຳນົດວິທີການຈັດຕັ້ງປະຕິບັດ.

2.9 ຄວາມຕ້ອງການໃນການນຳໃຊ້ດິນ ແລະ ຊັບພະຍາກອນທຳມະຊາດ.

2.10 ວິທີການອອກແບບເບື້ອງຕົ້ນໃນການກໍ່ສ້າງ, ບົດວິພາກໂຄງການ, ເຕັກນິກ, ເຕັກໂນໂລຊີ ແລະ ອຸປະກອນທີ່ເໝາະສົມ.

3. ກະຊວງແຜນການ ແລະ ການລົງທຶນ ສັງລວມການປະກອບຄຳເຫັນຂອງບັນດາພາກສ່ວນທີ່ກ່ຽວຂ້ອງຝ່າຍຫວຽດນາມ (ຫ້ອງວ່າການລັດຖະບານ, ກະຊວງການເງິນ, ພາກສ່ວນຄຸ້ມຄອງວິຊາການສະເພາະ) ເພື່ອລາຍງານນາຍົກລັດຖະມົນຕີພິຈາລະນາ, ອະນຸມັດບົດສະເໜີໂຄງການເພື່ອເອົາເຂົ້າໃນວາລະກອງປະຊຸມຄະນະລັດຖະບານ.

ມາດຕາ 9 ການກະກຽມໂຄງການລົງທຶນ

1. ສຳລັບໂຄງການທີ່ສອງຝ່າຍໄດ້ຕົກລົງກັນກຳນົດເຂົ້າໃນບັນຊີລາຍຊື່ໂຄງການໃໝ່ ແລະເຈົ້າຂອງໂຄງການ. ເຈົ້າຂອງໂຄງການຝ່າຍຫວຽດນາມ ປະສານສົມທົບກັບເຈົ້າຂອງໂຄງການຝ່າຍລາວເພື່ອສ້າງບົດລາຍງານການສຶກສາຄວາມເປັນໄປໄດ້ຂອງໂຄງການ;
2. ເຈົ້າຂອງໂຄງການຝ່າຍຫວຽດນາມຈັດສັນລາຍຈ່າຍໃນການສ້າງບົດລາຍງານສຶກສາຄວາມເປັນໄປໄດ້ຂອງໂຄງການໂດຍຄິດໄລ່ລວມເຂົ້າມູນຄ່າທັງໝົດຂອງໂຄງການ;
3. ຂັ້ນຕອນ ແລະ ລາຍຈ່າຍຄ່າສ້າງບົດລາຍງານສຶກສາຄວາມເປັນໄປໄດ້ຂອງໂຄງການ ແມ່ນອີງໃສ່ກົດໝາຍວ່າດ້ວຍ ການກໍ່ສ້າງຫວຽດນາມ. ສ່ວນບົດວິພາກ ແລະ ການອອກແບບໂຄງການຕ້ອງກຳນົດເນື້ອໃນລະອຽດຕາມທີ່ລະບຸໃນເອກະສານຊ້ອນທ້າຍ I ;
4. ກຳນົດເວລາສ້າງບົດລາຍງານສຶກສາຄວາມເປັນໄປໄດ້ຂອງໂຄງການແມ່ນບໍ່ເກີນ 18 ເດືອນ ນັບແຕ່ເວລາເຈົ້າຂອງໂຄງການຝ່າຍຫວຽດນາມໄດ້ຮັບແຈ້ງການກ່ຽວກັບລາຍຈ່າຍກະກຽມໂຄງການ.

4.1 ໝົດໄລຍະເວລາ 18 ເດືອນ, ໃນກໍລະນີສ້າງບົດລາຍງານສຶກສາຄວາມເປັນໄປໄດ້ຂອງໂຄງການບໍ່ສຳເລັດແລ້ວໂຄງການຖືກລົບລ້າງ; ເຈົ້າຂອງໂຄງການຝ່າຍຫວຽດນາມຕ້ອງສະຫຼຸບຄ່າໃຊ້ຈ່າຍໃນການກະກຽມໂຄງການຕາມລະບຽບການຄຸ້ມຄອງການເງິນ ແລະ ລາຍງານໃຫ້ນາຍົກລັດຖະມົນຕີຫວຽດນາມ;

4.2 ເຈົ້າຂອງໂຄງການຝ່າຍຫວຽດນາມ ແລະ ລາວຕ້ອງຮັບຜິດຊອບຕໍ່ລັດຖະບານ ແຕ່ລະຝ່າຍຖ້າບໍ່ສາມາດສ້າງບົດລາຍງານສຶກສາຄວາມເປັນໄປໄດ້ຂອງໂຄງການບໍ່ສຳເລັດ ແລະ ໂຄງການຖືກລົບລ້າງ.

ມາດຕາ 10 ຂັ້ນຕອນ, ເອກະສານຂໍອະນຸມັດໂຄງການ

1. ເຈົ້າຂອງໂຄງການຫວຽດນາມ ສົ່ງໜັງສືຂໍຄຳເຫັນໃສ່ບົດລາຍງານສຶກສາຄວາມເປັນໄປໄດ້ຂອງໂຄງການຈາກພາກສ່ວນທີ່ກ່ຽວຂ້ອງຝ່າຍຫວຽດນາມ (ເຊັ່ນ ກະຊວງແຜນການ ແລະການລົງທຶນ, ກະຊວງການເງິນ ແລະ ພາກສ່ວນຄຸ້ມຄອງຂະແໜງການສະເພາະ) ແລະ ເຈົ້າຂອງໂຄງການຝ່າຍລາວ;

2. ບົນພື້ນຖານການປະກອບຄຳເຫັນຂອງບັນດາຂະແໜງການທີ່ກ່ຽວຂ້ອງ ເຈົ້າຂອງໂຄງການຝ່າຍຫວຽດນາມ ສ້າງບົດລາຍງານສຶກສາຄວາມເປັນໄປໄດ້ຂອງໂຄງການ ໃຫ້ສຳເລັດຕາມລະບຽບການ;

3. ເຈົ້າຂອງໂຄງການຝ່າຍຫວຽດນາມສ້າງເອກະສານຕາມທີ່ລະບຸໃນ ມາດຕາ 11 ຂອງຂໍ້ຕົກລົງນີ້ ເພື່ອລາຍງານຕໍ່ນາຍົກລັດຖະມົນຕີພິຈາລະນາອະນຸມັດມູນຄ່າລົງທຶນທັງໝົດ, ຈຳນວນທຶນຊ່ວຍເຫຼືອ, ຈຸດປະສົງ, ເປົ້າໝາຍ ແລະ ຜົນໄດ້ຮັບຂອງໂຄງການ ແລະ ນຳສົ່ງບົດລາຍງານການສຶກສາຄວາມເປັນໄປໄດ້ຂອງໂຄງການໃຫ້ຝ່າຍລາວດຳເນີນການຂໍການອະນຸມັດຮັບຮອງໂຄງການໃຫ້ຖືກຕ້ອງຕາມກົດໝາຍຂອງລາວ;

4. ຝ່າຍລາວແຈ້ງການອະນຸມັດຮັບຮອງໂຄງການໃຫ້ພາກສ່ວນທີ່ກ່ຽວຂ້ອງຝ່າຍຫວຽດນາມເພື່ອປະສານສົມທົບ ແລະຄຸ້ມຄອງໂຄງການ.

ມາດຕາ 11 ເອກະສານສະເໜີຂໍການພິຈາລະນາອະນຸມັດໂຄງການ

ເອກະສານສະເໜີຕໍ່ນາຍົກລັດຖະມົນຕີຫວຽດນາມ, ມີເນື້ອໃນດັ່ງນີ້:

1. ໜັງສືສະເໜີເຖິງທ່ານນາຍົກລັດຖະມົນຕີຫວຽດນາມ;

2. ບົດລາຍງານສຶກສາຄວາມເປັນໄປໄດ້ຂອງໂຄງການ;

3. ໜັງສືປະກອບຄຳເຫັນໃສ່ບົດລາຍງານສຶກສາຄວາມເປັນໄປໄດ້ຂອງໂຄງການຂອງຂະແໜງການກ່ຽວຂ້ອງຂອງຝ່າຍຫວຽດນາມ ແລະ ເຈົ້າຂອງໂຄງການຝ່າຍລາວ;

4. ບັນດາເອກະສານທີ່ກ່ຽວຂ້ອງອື່ນໆ.

ມາດຕາ 12 ການຈັດຕັ້ງປະຕິບັດໂຄງການ

1. ພາຍຫຼັງສອງລັດຖະບານຮັບຮອງເອົາໂຄງການ, ເຈົ້າຂອງໂຄງການຝ່າຍຫວຽດນາມ ແລະ ລາວ ເຊັນຂໍ້ຕົກລົງຈັດຕັ້ງປະຕິບັດໂຄງການ, ເຊິ່ງຕ້ອງກຳນົດຊັດເຈນໜ້າທີ່ຄວາມຮັບຜິດຊອບຂອງເຈົ້າຂອງໂຄງການແຕ່ລະຝ່າຍຕາມທີ່ໄດ້ກຳນົດໃນເອກະສານຊ້ອນທ້າຍ II;

2. ການກຳນົດ, ກວດກາ, ສະໜູບບັນຊີຂາດຕົວ, ປະເມີນຜົນ ເພື່ອພິຈາລະນາອະນຸມັດດ້ານເຕັກນິກ, ແຜນວາດການອອກແບບກໍ່ສ້າງ, ຂຶ້ນແຜນລາຍຈ່າຍກໍ່ສ້າງຕາມທີ່ລະບຸໄວ້ໃນ ກົດໝາຍ ວ່າດ້ວຍ ການກໍ່ສ້າງຂອງຫວຽດນາມ;

3. ເຈົ້າຂອງໂຄງການຝ່າຍຫວຽດນາມເປັນເຈົ້າການປະສານສົມທົບ ກັບ ເຈົ້າຂອງໂຄງການຝ່າຍລາວ ໃນການຄຸ້ມຄອງ ແລະ ຮັບຜິດຊອບຕໍ່ວຽກກໍ່ສ້າງໂຄງການໃຫ້ຖືກຕ້ອງຕາມລະບຽບການທີ່ກ່ຽວຂ້ອງຂອງສອງປະເທດເພື່ອຮັບປະກັນຄຸນນະພາບ, ຄວາມຄືບໜ້າ, ຜົນໄດ້ຮັບຂອງໂຄງການ ໃຫ້ສອດຄ່ອງກັບມູນຄ່າການລົງທຶນທັງໝົດຂອງໂຄງການທີ່ໄດ້ຮັບການອະນຸມັດຮັບຮອງ;

4. ບໍລິສັດທີ່ປຶກສາຕິດຕາມ ແລະ ຄວບຄຸມການກໍ່ສ້າງ; ບັນດາບໍລິສັດທີ່ເຂົ້າຮ່ວມການປະມູນເພື່ອສຳຫຼວດ ແລະ ອອກແບບ; ບໍລິສັດທີ່ຈັດຕັ້ງປະຕິບັດໂຄງການຂອງທັງສອງຝ່າຍລ້ວນແຕ່ມີຄວາມຮັບຜິດຊອບຕໍ່ໜ້າກົດໝາຍຂອງແຕ່ລະຝ່າຍໃນການປະຕິບັດໜ້າວຽກ ແລະ ຮັບປະກັນບໍລິມາດໜ້າວຽກຕາມສັນຍາ;

5. ເຈົ້າຂອງໂຄງການຝ່າຍລາວມີໜ້າທີ່ອຳນວຍຄວາມສະດວກໃນການດຳເນີນເອກະສານນຳເຂົ້າ ລວມທັງການສະເໜີຂໍຍົກເວັ້ນພາສີ - ອາກອນ ສຳລັບວັດສະດຸ, ອຸປະກອນ, ພາຫະນະຮັບໃຊ້ໃນການຈັດຕັ້ງປະຕິບັດໂຄງການຢູ່ ສປປ ລາວ ຕາມແຜນການນຳເຂົ້າ (Master List) ທີ່ໄດ້ຖືກຮັບຮອງ. ພາຍຫຼັງສຳເລັດໂຄງການ, ເຈົ້າຂອງໂຄງການ ແລະ ບໍລິສັດກໍ່ສ້າງຝ່າຍຫວຽດນາມ ຕ້ອງດຳເນີນຂັ້ນຕອນການເຄື່ອນຍ້າຍອຸປະກອນກໍ່ສ້າງທີ່ຍັງເຫຼືອ, ພາຫະນະ ແລະ ກົນຈັກກັບຄືນປະເທດ. ໃນກໍລະນີທີ່ຕ້ອງການຂາຍຢູ່ ສປປ ລາວ ຕ້ອງປະຕິບັດຕາມກົດໝາຍຂອງລາວ;

6. ການແກ້ໄຂບັນຫາທີ່ເກີດຂຶ້ນໃນໄລຍະການຈັດຕັ້ງປະຕິບັດໂຄງການທີ່ສົ່ງຜົນກະທົບຕໍ່ເນື້ອໃນເອກະສານໂຄງການ:

   6.1 ໃນກໍລະນີການຈັດຕັ້ງປະຕິບັດໂຄງການຖ້າເກີດມີເຫດການສົ່ງຜົນກະທົບເຖິງເນື້ອໃນເອກະສານໂຄງການທີ່ໄດ້ຮັບການອະນຸມັດຮັບຮອງແຕ່ບໍ່ສົ່ງຜົນກະທົບຕໍ່ມູນຄ່າໂຄງການທັງໝົດ, ຈຸດປະສົງໂຄງການ, ເຈົ້າຂອງໂຄງການຝ່າຍຫວຽດນາມປະສານສົມທົບກັບເຈົ້າຂອງໂຄງການຝ່າຍລາວລາຍງານນາຍົກລັດຖະມົນຕີລາວ ເພື່ອພິຈາລະນາຕາມຄວາມເໝາະສົມ;

   6.2 ໃນກໍລະນີການຈັດຕັ້ງປະຕິບັດໂຄງການຖ້າເກີດມີເຫດການສົ່ງຜົນກະທົບເຖິງເນື້ອໃນເອກະສານໂຄງການທີ່ໄດ້ຮັບການອະນຸມັດຮັບຮອງທີ່ເຮັດໃຫ້ມີການປ່ຽນແປງມູນຄ່າ

ໂຄງການ, ຈຸດປະສົງໂຄງການເຈົ້າຂອງໂຄງການຝ່າຍຫວຽດນາມປະສານສົມທົບກັບເຈົ້າ ຂອງໂຄງການຝ່າຍລາວລາຍງານອະທິບາຍເຫດຜົນຕໍ່ພາກສ່ວນທີ່ກ່ຽວຂ້ອງ ແລະ ນາຍົກລັດຖະມົນຕີສອງປະເທດ ເພື່ອພິຈາລະນາແກ້ໄຂ.

7. ໂຄງການກໍ່ສ້າງທີ່ມີລັກສະນະພິເສດພົວພັນເຖິງສອງປະເທດ ແມ່ນສອງຝ່າຍຮ່ວມກັນ ພິຈາລະນາແກ້ໄຂ.

ມາດຕາ 13 ຂັ້ນຕອນການຈັດຕັ້ງປະຕິບັດໂຄງການສະໜັບສະໜຸນດ້ານວິຊາການ

1. ໂຄງການທີ່ມີລັກສະນະເປັນການຊ່ວຍເຫຼືອດ້ານວິຊາການໃນຂົງເຂດບໍລິຫານ, ເສດຖະກິດຕ້ອງ ປະຕິບັດຕາມຂັ້ນຕອນຄືກັນກັບໂຄງການລົງທຶນກໍ່ສ້າງ,

   1.1 ບົດສະເໜີໂຄງການ;

   1.2 ການອະນຸມັດໂຄງການ;

   1.3 ການຈັດຕັ້ງປະຕິບັດ;

   1.4 ກວດກາແລະປະເມີນຜົນພາຍຫຼັງສຳເລັດໂຄງການ, ການມອບ-ຮັບໂຄງການ, ສະສາງບັນຊີ ໂຄງການ.

2. ການດຳເນີນຂັ້ນຕອນຂໍໂຄງການສະໜັບສະໜຸນດ້ານວິຊາການແມ່ນໄດ້ລະບຸໃນ ມາດຕາ 8 ຂອງ ຂໍ້ຕົກລົງສະບັບນີ້;

3. ພາຍຫຼັງສອງຝ່າຍໄດ້ອະນຸມັດບົດສະເໜີໂຄງການ, ເຈົ້າຂອງໂຄງການຝ່າຍຫວຽດນາມ ປະສານ ສົມທົບກັບເຈົ້າຂອງໂຄງການຝ່າຍລາວ ເພື່ອສ້າງບົດສຶກສາຄວາມເປັນໄປໄດ້ຂອງ ໂຄງການສະ ໜັບສະໜຸນດ້ານວິຊາການຕາມທີ່ລະບຸໃນເອກະສານຊ້ອນທ້າຍ III ແລະ ແຜນຄາດຄະເນລາຍ ຈ່າຍຂອງໂຄງການ;

4. ການສ້າງແຜນຄາດຄະເນລາຍຈ່າຍໂຄງການ ແມ່ນອີງໃສ່ຫົວໜ່ວຍຄິດໄລ່ໃນແຕ່ລະໜ້າວຽກ, ຄິດໄລ່ລາຄາຕາມລະບຽບການ, ເຊິ່ງໜ້າວຽກທີ່ຈັດຕັ້ງປະຕິບັດຢູ່ຫວຽດນາມ ແມ່ນນຳໃຊ້ຫົວ ໜ່ວຍຄິດໄລ່, ມາດຕະຖານ, ເຕັກນິກຂອງຝ່າຍຫວຽດນາມ ສ່ວນໜ້າວຽກທີ່ຈັດຕັ້ງປະຕິບັດຢູ່ ລາວ ແມ່ນໃຫ້ນຳໃຊ້ຫົວໜ່ວຍຄິດໄລ່, ມາດຕະຖານ, ເຕັກນິກຂອງລາວ. ໃນກໍລະນີຝ່າຍລາວບໍ່ມີ ຫົວໜ່ວຍຄິດໄລ່, ລະບຽບການຄິດໄລ່ລາຄາໃນແຕ່ລະໜ້າວຽກ ແມ່ນໃຫ້ຄິດໄລ່ຕາມລາຄາຕົວຈິງ ຂອງວິສາຫະກິດ, ອີງການຈັດຕັ້ງຝ່າຍລາວ ແຕ່ບໍ່ໃຫ້ເກີນລາຄາຫົວໜ່ວຍຄິດໄລ່, ລາຄາໃນແຕ່ລະ ໜ້າວຽກຕາມທີ່ໄດ້ກຳນົດໃນລະບຽບການຂອງຝ່າຍຫວຽດນາມ;

5. ເຈົ້າຂອງໂຄງການຝ່າຍຫວຽດນາມ ຂໍຄຳເຫັນຈາກພາກສ່ວນທີ່ກ່ຽວຂ້ອງເຊັ່ນ ກະຊວງແຜນການ ແລະ ການລົງທຶນ, ກະຊວງການເງິນ, ອົງການຄຸ້ມຄອງສະເພາະຂອງຝ່າຍຫວຽດນາມ ແລະເຈົ້າ ຂອງໂຄງການຝ່າຍລາວ ເພື່ອລາຍງານນາຍົກລັດຖະມົນຕີ ພິຈາລະນາອະນຸມັດຮັບຮອງໂຄງການ ສະໜັບສະໜຸນດ້ານວິຊາການ ແລະຈັດສັນທຶນຊ່ວຍເຫຼືອສຳລັບໂຄງການ;

6. ເຈົ້າຂອງໂຄງການຝ່າຍຫວຽດນາມ ແຈ້ງໃຫ້ເຈົ້າຂອງໂຄງການຝ່າຍລາວ ຮັບຊາບການ ຮັບຮອງ ໂຄງການສະໜັບສະໜຸນດ້ານວິຊາການ ເພື່ອປະສານສົມທົບກັນຈັດຕັ້ງຜັນຂະຫຍາຍໂຄງການ;
7. ພາຍຫຼັງສຳເລັດການຈັດຕັ້ງປະຕິບັດໂຄງການ, ເຈົ້າຂອງໂຄງການຝ່າຍຫວຽດນາມ ແລະ ລາວ ເຊັນ ບົດບັນທຶກການກວດກາໜ້າວຽກ, ບົດບັນທຶກການມອບ - ຮັບໂຄງການ ໃຫ້ເຈົ້າຂອງໂຄງການ ຝ່າຍລາວ;
8. ໃນກຳນົດເວລາບໍ່ໃຫ້ກາຍ 90 ວັນ ພາຍຫຼັງເຊັນບົດບັນທຶກກວດກາໜ້າວຽກ, ບົດບັນທຶກມອບ - ຮັບ ໂຄງການ, ເຈົ້າຂອງໂຄງການຝ່າຍຫວຽດນາມ ປະກອບເອກະສານຊຳລະສະສາງໂຄງການ ຕາມລະບຽບການຂອງຝ່າຍຫວຽດນາມ;
9. ເຈົ້າຂອງໂຄງການຝ່າຍຫວຽດນາມ ປະສານສົມທົບກັບເຈົ້າຂອງໂຄງການຝ່າຍລາວ ໃນການກວດ ສອບການນຳໃຊ້ທຶນຊ່ວຍເຫຼືອຕ່າງໆຂອງໂຄງການ ຕາມກົດໝາຍຂອງຫວຽດນາມ;
10. ເຈົ້າຂອງໂຄງການຝ່າຍຫວຽດນາມ ນຳສົ່ງການບົດລາຍງານການສຳເລັດໂຄງການ ແລະບົດລາຍ ງານການກວດສອບໂຄງການຂອງອົງການກວດສອບໃຫ້ກະຊວງການເງິນ ແລະ ພາກສ່ວນທີ່ ກ່ຽວຂ້ອງຂອງຝ່າຍຫວຽດນາມເພື່ອຕິດຕາມ ແລະ ຄຸ້ມຄອງ.

ມາດຕາ 14 ການສ້າງແຜນລາຍຈ່າຍ, ຈັດສັນທຶນຊ່ວຍເຫຼືອລ້າປະຈຳປີໃຫ້ໂຄງການ

1. ກ່ອນວັນທີ 20 ເດືອນທໍລະກິດ ຂອງແຕ່ລະປີ, ບັນດາກະຊວງ, ຂະແໜງການ, ອົງການຈັດຕັ້ງສູນ ກາງ, ທ້ອງຖິ່ນຂອງຫວຽດນາມ ສ້າງແຜນການນຳໃຊ້ທຶນຊ່ວຍເຫຼືອຂອງປີຕໍ່ໄປ ໂດຍອີງໃສ່ຜົນ ການຈັດຕັ້ງປະຕິບັດ ບັນດາໂຄງການທີ່ກຳລັງດຳເນີນຢູ່ ແລະສົ່ງໃຫ້ ກະຊວງແຜນການ ແລະການ ລົງທຶນ, ກະຊວງການເງິນ ສັງລວມເຂົ້າແຜນງົບປະມານ ລາຍງານລັດຖະບານ ແລະ ສະເໜີສະພາ ແຫ່ງຊາດຫວຽດນາມ ພິຈາລະນາຮັບຮອງ;

2. ກຳນົດເວລາບໍ່ໃຫ້ຊ້າເກີນ 45 ວັນ ກ່ອນມື້ເປີດກອງປະຊຸມຄະນະກຳມະການຮ່ວມມື ລາວ-ຫວຽດນາມ ປະຈຳປີ, ອີງໃສ່ມູນຄ່າທຶນຊ່ວຍເຫຼືອທີ່ໄດ້ຮັບການອະນຸມັດຈາກສະພາແຫ່ງຊາດ, ແຜນຈັດສັນທຶນຊ່ວຍເຫຼືອໃນປີຕໍ່ໄປຂອງພາກສ່ວນທີ່ກ່ຽວຂ້ອງຂອງຫວຽດນາມ, ກະຊວງ ແຜນການ ແລະ ການລົງທຶນ ປະສານສົມທົບກັບ ກະຊວງການເງິນ ສ້າງແຜນຈັດສັນທຶນຊ່ວຍເຫຼືອ ໃຫ້ບັນດາໂຄງການ ແລ້ວນຳສົ່ງໃຫ້ ຄະນະກຳມະການຮ່ວມມືລາວ - ຫວຽດ ແລະ ພາກສ່ວນທີ່ ກ່ຽວຂ້ອງ ເພື່ອກະກຽມແລກປ່ຽນໃນກອງປະຊຸມຄະນະກຳມະການຮ່ວມມືລາວ - ຫວຽດນາມ;
3. ກະຊວງແຜນການ ແລະ ການລົງທຶນ ໂດຍການປະສານສົມທົບກັບ ກະຊວງການເງິນ ຫວຽດນາມ ແຈ້ງແຜນການຈັດສັນທຶນຊ່ວຍເຫຼືອປະຈຳປີ ໃຫ້ບັນດາໂຄງການທີ່ກອງປະຊຸມຄະນະກຳມະການ ຮ່ວມມື ລະຫວ່າງລັດຖະບານ ລາວ ແລະ ຫວຽດນາມ ໄດ້ຕົກລົງ ແລະ ນາຍົກລັດຖະມົນຕີ ຫວຽດນາມໄດ້ຮັບຮອງ ໃຫ້ບັນດາຂະແໜງການ, ອົງການຈັດຕັ້ງ ແລະ ທ້ອງຖິ່ນຂອງຝ່າຍ ຫວຽດນາມ ແລະ ຝ່າຍລາວ ພາຍໃນກຳນົດ 30 ວັນ.

4. ບັນດາກະຊວງ, ຂະແໜງການ, ອົງການຈັດຕັ້ງ ແລະ ທ້ອງຖິ່ນຫວຽດນາມ ມອບແຜນລາຍຈ່າຍທຶນຊ່ວຍເຫຼືອດັ່ງກ່າວໃຫ້ໜ່ວຍງານທີ່ຂຶ້ນກັບຂະແໜງການຕົນນຳໄປຜັນຂະຫຍາຍຈັດຕັ້ງ ຈັດຕັ້ງປະຕິບັດໂດຍສົມທົບກັບຂະແໜງການທີ່ໄດ້ຮັບການຊ່ວຍເຫຼືອຂອງຝ່າຍລາວ.

ມາດຕາ 15 ການເບີກຈ່າຍເງິນ, ການຊຳລະສະສາງ ແລະສະຫຼຸບການນຳໃຊ້ທຶນຊ່ວຍເຫຼືອ

1. ການເບີກຈ່າຍທຶນຊ່ວຍເຫຼືອ

1.1 ບັນດາກະຊວງ, ຂະແໜງການ, ອົງການຈັດຕັ້ງ ແລະທ້ອງຖິ່ນຝ່າຍຫວຽດນາມ ມອບແຜນລາຍຈ່າຍໂຄງການໃຫ້ຂະແໜງການຂອງຕົນ ເພື່ອເບີກຖອນຊຳລະໃຫ້ຖືກຕາມລະບຽບການຂອງຫວຽດນາມ;

1.2 ຄັງເງິນແຫ່ງຊາດຫວຽດນາມ ດຳເນີນການກວດກາ, ເບີກຈ່າຍທຶນຊ່ວຍເຫຼືອຕາມລະບຽບການ. ໃນໄລຍະ 06 ເດືອນ ໃຫ້ລາຍງານສະພາບການເບີກຈ່າຍທຶນຊ່ວຍເຫຼືອ, ສົ່ງໃຫ້ກະຊວງການເງິນຫວຽດນາມ, ກະຊວງແຜນການ ແລະ ການລົງທຶນຫວຽດນາມ;

1.3 ສຳລັບບັນດາໂຄງການທີ່ນຳໃຊ້ທຶນຊ່ວຍເຫຼືອທີ່ມອບໃຫ້ຝ່າຍລາວ ເປັນຜູ້ຮັບຜິດຊອບຈັດຕັ້ງປະຕິບັດການຊຳລະເງິນ ແມ່ນປະຕິບັດຕາມຂໍ້ຕົກລົງສະເພາະທີ່ສອງລັດຖະບານໄດ້ເຊັນສັນຍາຮ່ວມກັນ.

2. ການຊຳລະສະສາງບັນຊີທຶນຊ່ວຍເຫຼືອ: ໃນກຳນົດ 10 ເດືອນ ນັບແຕ່ມື້ສິ້ນສຸດປີງົບປະມານ, ບັນດາກະຊວງ, ຂະແໜງການ, ອົງການຈັດຕັ້ງ ແລະ ທ້ອງຖິ່ນຝ່າຍຫວຽດນາມ ສ້າງບົດລາຍງານສະຫຼຸບການນຳໃຊ້ທຶນຊ່ວຍເຫຼືອ (ທີ່ນຳໃຊ້ໃນຂະແໜງການສຶກສາ, ໂຄງການ) ຂອງປີກ່ອນແລ້ວນຳສົ່ງກະຊວງການເງິນຫວຽດນາມເພື່ອສະຫຼຸບສັງລວມງົບປະມານໃຫ້ຖືກຕາມລະບຽບການ ແລະ ກົດໝາຍງົບປະມານຂອງຝ່າຍຫວຽດນາມ;

3. ການຊຳລະງົບປະມານໃນທ້າຍປີ: ການຊຳລະງົບປະມານໃນທ້າຍປີຕໍ່ກັບທຶນຊ່ວຍເຫຼືອລ້າ ແມ່ນປະຕິບັດຕາມລະບຽບການ ແລະ ກົດໝາຍ ງົບປະມານຂອງຝ່າຍຫວຽດນາມ.

ມາດຕາ 16 ການຈັດຊື້ ແລະການປະມູນ

1. ບັນດາໜ້າວຽກທີ່ຝ່າຍຫວຽດນາມເປັນຜູ້ຈັດຕັ້ງປະຕິບັດ ການຈັດຊື້ ແລະ ການປະມູນຕ້ອງປະຕິບັດຕາມກົດໝາຍການຈັດຊື້ຂອງຫວຽດນາມ;
2. ບັນດາໜ້າວຽກທີ່ຝ່າຍລາວເປັນຜູ້ຈັດຕັ້ງປະຕິບັດທີ່ນຳໃຊ້ທຶນສົມທົບ ຫຼື ທຶນຊ່ວຍເຫຼືອຂອງລັດຖະບານຫວຽດນາມ ການຈັດຊື້ ແລະ ການປະມູນ ແມ່ນປະຕິບັດຕາມກົດໝາຍປະມູນຂອງລາວ.

ມາດຕາ 17 ການສະໜອງຂໍ້ມູນການເບີກຖອນທຶນຊ່ວຍເຫຼືອ

ໃນກຳນົດທຸກໆ 6 ເດືອນ, ກະຊວງການເງິນຫວຽດນາມ ສະໜອງຕົວເລກເບີກຈ່າຍທຶນຊ່ວຍເຫຼືອໃຫ້ກະຊວງການເງິນລາວ ສ່ວນກະຊວງການເງິນລາວ ສະໜອງຕົວເລກເບີກຈ່າຍທຶນສົມທົບໃຫ້ບັນດາໂຄງການ ໃຫ້ກະຊວງການເງິນຫວຽດນາມ.

ມາດຕາ 18 ການລາຍງານ, ການກວດກາໂຄງການຊ່ວຍເຫຼືອ

1. ໃນກຳນົດ 06 ເດືອນ, ກ່ອນວັນທີ 20 ເດືອນກໍລະກົດ ແລະ ວັນທີ 20 ເດືອນມັງກອນ ຂອງປີຕໍ່ໄປ, ເຈົ້າຂອງໂຄງການຝ່າຍຫວຽດນາມ ສ້າງບົດລາຍງານສະພາບການຈັດຕັ້ງປະຕິບັດໂຄງການ ເພື່ອລາຍງານຄວາມຫຍຸ້ງຍາກ, ບັນຫາຄົງຄ້າງ, ເຫດສຸດວິໄສ, ການນຳໃຊ້ທຶນຊ່ວຍເຫຼືອ, ທຶນສົມທົບ, ແຜນເບີກຈ່າຍທຶນຊ່ວຍເຫຼືອໃນປີຕໍ່ໄປຕາມແບບຟອມ IVa ແລະ IVb ເພື່ອສົ່ງໃຫ້ກະຊວງການເງິນ, ກະຊວງແຜນການ ແລະ ການລົງທຶນ ແລະພາກສ່ວນທີ່ກ່ຽວຂ້ອງຂອງຝ່າຍຫວຽດນາມເພື່ອຕິດຕາມ ແລະຄຸ້ມຄອງ.
2. ຄະນະກຳມະການຮ່ວມມືຫວຽດນາມ - ລາວ ແລະ ຄະນະກຳມະການຮ່ວມມື ລາວ - ຫວຽດນາມ ຊີ້ນຳ, ປະສານສົມທົບກັບເຈົ້າຂອງໂຄງການ ແລະ ພາກສ່ວນທີ່ກ່ຽວຂ້ອງຂອງສອງຝ່າຍ ເພື່ອກວດກາສະພາບການຈັດຕັ້ງປະຕິບັດໂຄງການປະຈຳ 06 ເດືອນ ຫຼື ກວດກາແບບກະທັນຫັນ ເພື່ອກຳໄດ້ຂໍ້ຫຍຸ້ງຍາກ, ຂໍ້ຄົງຄ້າງ ເພື່ອລາຍງານໃຫ້ນາຍົກລັດຖະມົນຕີສອງຝ່າຍອະນຸມັດຮັບຮອງມາດຕະການແກ້ໄຂ.
3. ກະຊວງການເງິນຫວຽດນາມ ພຽງກະຊວງດຽວທີ່ມີຄວາມເປັນເອກະລາດ ຫຼື ປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງ ສາມາດກວດກາການປະຕິບັດຂໍ້ຕົກລົງ ກ່ຽວກັບ ລະບຽບການເງິນ ແລະ ການຄຸ້ມຄອງການນຳໃຊ້ແຫຼ່ງທຶນຊ່ວຍເຫຼືອລ້າຈາກລັດຖະບານຫວຽດນາມໃຫ້ແກ່ລັດຖະບານລາວຢ່າງເປັນປະຈຳ ຫຼື ກະທັນຫັນ.

ມາດຕາ 19 ການມອບ-ຮັບໂຄງການ

1. ເມື່ອການກໍ່ສ້າງໂຄງການສຳເລັດ, ເຈົ້າຂອງໂຄງການຝ່າຍຫວຽດນາມ ແລະ ລາວແຕ່ງຕັ້ງຄະນະກຳການປະເມີນຜົນຮ່ວມກັນ ເພື່ອດຳເນີນການປະເມີນຜົນໂຄງການທັງໝົດ;
2. ໂຄງການຈະຖືກມອບ - ຮັບ ແລະນຳໃຊ້ພາຍຫຼັງທີ່ຄະນະກຳມະການຮ່ວມມືມີບົດບັນທຶກຢັ້ງຢືນຄຸນນະພາບ,ຄວາມຖືກຕ້ອງຕາມການອອກແບບ,ປະສິດທິຜົນຂອງໂຄງການ ແລະ ສອດຄ່ອງກັບເງື່ອນໄຂເພື່ອນຳໃຊ້.

ໃນກໍລະນີໂຄງການກໍ່ສ້າງຍັງມີບາງໜ້າວຽກທີ່ບໍ່ສຳເລັດແຕ່ບໍ່ສົ່ງຜົນກະທົບຮ້າຍແຮງ ແລະ ມີຄວາມປອດໄພໃນການນຳໃຊ້ໂຄງການ ແມ່ນຄະນະກຳມະການປະເມີນຜົນຮ່ວມກັນຂອງເຈົ້າຂອງໂຄງການທັງສອງຝ່າຍພິຈາລະນານຳໃຊ້ ແລະ ສາມາດມອບໂຄງການໃຫ້ຝ່າຍລາວເປັນຜູ້ຄຸ້ມຄອງນຳໃຊ້ໄດ້.

ບົດບັນທຶກການປະເມີນຜົນຮ່ວມກັນຂອງເຈົ້າຂອງໂຄງການສອງຝ່າຍຕ້ອງລະບຸບັນດາໜ້າວຽກທີ່ຍັງບໍ່ສຳເລັດທີ່ຕ້ອງໄດ້ສືບຕໍ່ເຮັດໃຫ້ສຳເລັດຕາມກຳນົດເວລາ. ເຈົ້າຂອງໂຄງການຝ່າຍຫວຽດນາມຕ້ອງສືບຕໍ່ເຮັດວຽກທີ່ຍັງຄົງຄ້າງໃຫ້ສຳເລັດ ແລະ ຈັດສັນເງິນໃນຂະແໜງການຂອງຕົນ

ມາດຕາ 22 ຜົນສັກສິດໃນການຈັດຕັ້ງປະຕິບັດ

1. ຂໍ້ຕົກລົງສະບັບນີ້ປ່ຽນແທນ "ຂໍ້ຕົກລົງກ່ຽວກັບລະບຽບການເງິນ ແລະ ການຄຸ້ມຄອງການນຳໃຊ້ແຫຼ່ງທຶນຊ່ວຍເຫຼືອລ້າຈາກລັດຖະບານຫວຽດນາມ ໃຫ້ແກ່ ລັດຖະບານລາວ" ທີ່ໄດ້ລົງນາມໃນວັນທີ12 ທັນວາ 2011 ທີ່ ນະຄອນຫຼວງຮ່າໂນ;
2. ຂໍ້ຕົກລົງສະບັບນີ້ມີຜົນສັກສິດນັບແຕ່ມື້ລົງລາຍເຊັນເປັນຕົ້ນໄປ ແລະ ມີຜົນບັງຄັບໃຊ້ໃນໄລຍະ 05 (ຫ້າ) ປີ;
3. ກໍລະນີຊ້າສຸດໃນ 6 ເດືອນ ກ່ອນໝົດເວລາມີຜົນບັງຄັບໃຊ້ໄດ້ຂອງຂໍ້ຕົກລົງສະບັບນີ້, ອີກຝ່າຍບໍ່ໄດ້ຮັບໜັງສືແຈ້ງເຈດຈຳນົງຂໍຢຸດຕິການນຳໃຊ້ຂໍ້ຕົກລົງສະບັບນີ້, ຂໍ້ຕົກລົງສະບັບນີ້ຈະອັດຕະໂນມັດໄດ້ຮັບການຕໍ່ອະຍຸມີຜົນນຳໃຊ້ໄດ້ໃນໄລຍະເວລາ 5 ປີ ຕໍ່ໄປອີກ;
4. ຂໍ້ຕົກລົງສະບັບນີ້ສາມາດດັດແກ້, ເພີ່ມເຕີມບົນພື້ນຖານການເຫັນດີເປັນເອກະພາບຂອງທັງສອງຝ່າຍ. ການດັດແກ້, ເພີ່ມເຕີມເນື້ອໃນກໍ່ຄືເອກະສານຊ້ອນທ້າຍ ແມ່ນບໍ່ສາມາດແຍກອອກຈາກຂໍ້ຕົກລົງສະບັບນີ້ໄດ້.

ຂໍ້ຕົກລົງສະບັບນີ້ ໄດ້ລົງນາມ ທີ່ ນະຄອນຫຼວງຮ່າໂນ, ວັນທີ ເດືອນ 12 ປີ 2020 ເປັນ 02 (ສອງ) ສະບັບຕົ້ນເປັນພາສາລາວ ແລະ ພາສາຫວຽດ, ທັງສອງສະບັບມີຄຸນຄ່າເທົ່າທຽມກັນ.

ຕາງໜ້າລັດຖະບານ ແຫ່ງ ສປປລາວ

ບຸນໂຈມ ອຸບົນປະເສີດ
ຮອງລັດຖະມົນຕີກະຊວງການເງິນ

ຕາງໜ້າລັດຖະບານ ແຫ່ງ ສສ ຫວຽດນາມ

ເຈີນ ຊວນ ຮ່າ
ຮອງລັດຖະມົນຕີກະຊວງການເງິນ

ເພື່ອຊຳລະໃຫ້ໜ້າວຽກທີ່ຍັງຄົງຄ້າງ; ເຈົ້າຂອງໂຄງການຝ່າຍຫວຽດນາມ ແລະ ລາວຈະເຊັນບົດບັນທຶກການປະເມີນຜົນເມື່ອທຸກໜ້າວຽກໄດ້ສຳເລັດ.

3. ໃນກຳນົດ60 ວັນ, ຫຼັງຈາກຄະນະກຳມະການປະເມີນຜົນຮ່ວມກັນໄດ້ເຊັນບົດບັນທຶກເຈົ້າຂອງໂຄງການສອງຝ່າຍລາຍງານໃຫ້ຄະນະກຳມະການຮ່ວມມືສອງຝ່າຍ ເພື່ອຂໍອະນຸຍາດເຊັນບົດບັນທຶກການມອບ - ຮັບໂຄງການ ແລະ ມອບ - ຮັບບັນດາເອກະສານທີ່ກ່ຽວຂ້ອງກັບໂຄງການ;

4. ບົດບັນທຶກມອບ – ຮັບໂຄງການຈະຕ້ອງປະກອບດ້ວຍ ບັນດາ ເອກະສານທີ່ຕິດພັນກັບໂຄງການ.

5. ພາຍໃນ 90 ວັນ, ພາຍຫຼັງເຊັນບົດບັນທຶກມອບ - ຮັບໂຄງການເຈົ້າຂອງໂຄງການຝ່າຍຫວຽດນາມ ສ້າງບົດລາຍງານຜົນສຳເລັດໂຄງການຕາມລະບຽບການຂອງຝ່າຍຫວຽດນາມ.

6. ເຈົ້າຂອງໂຄງການຝ່າຍຫວຽດນາມປະສານສົມທົບກັບເຈົ້າຂອງໂຄງການຝ່າຍລາວ ເພື່ອດຳເນີນການກວດສອບການນຳໃຊ້ທຶນຊ່ວຍເຫຼືອຂອງ ໂຄງການ ຕາມກົດໝາຍ ຂອງຫວຽດນາມ;

7. ເຈົ້າຂອງໂຄງການຝ່າຍຫວຽດນາມນຳສົ່ງບົດລາຍງານຜົນການສຳເລັດ ແລະ ຜົນການກວດສອບບັນຊີຂອງໂຄງການໃຫ້ ກະຊວງການເງິນ ຕິດຕາມ ແລະ ຄຸ້ມຄອງ.

ພາກ IV
ການຈັດຕັ້ງປະຕິບັດຂໍ້ຕົກລົງ

ມາດຕາ 20 ມາດຕະການຈັດຕັ້ງປະຕິບັດ

1. ສອງຝ່າຍຊີ້ນຳບັນດາພາກສ່ວນທີ່ກ່ຽວຂ້ອງຂອງຕົນຈັດຕັ້ງປະຕິບັດການຄຸ້ມຄອງການເງິນຢ່າງເຂັ້ມງວດ, ໃນການນຳໃຊ້ທຶນຊ່ວຍເຫຼືອຂອງລັດຖະບານຫວຽດນາມ ມອບໃຫ້ ລັດຖະບານລາວຕາມທີ່ໄດ້ກຳນົດໃນຂໍ້ຕົກລົງສະບັບນີ້;

2. ບັນດາຂໍ້ຫຍຸ້ງຍາກທີ່ເກີດຂຶ້ນໃນເວລາການຈັດຕັ້ງປະຕິບັດໂຄງການ, ການຜັນຂະຫຍາຍຂໍ້ຕົກລົງສະບັບນີ້ ແມ່ນໃຫ້ແກ້ໄຂດ້ວຍວິທີການເຈລະຈາລະຫວ່າງສອງຝ່າຍ;

ມາດຕາ 21 ການສືບຕໍ່ຈັດຕັ້ງປະຕິບັດສັນຍາ

1. ບັນດາໂຄງການ ທີ່ທັງສອງຝ່າຍເປັນເອກະພາບກຳນົດໃນບັນຊີລາຍຊື່ໂຄງການທີ່ນຳໃຊ້ *ທຶນ*ຊ່ວຍເຫຼືອໃນສັນຍາຮ່ວມມືລະຫ່ວາງ ສອງລັດຖະບານ ກ່ອນຂໍ້ຕົກລົງສະບັບນີ້ມີຜົນສັກສິດໃຫ້ສືບຕໍ່ຈັດຕັ້ງປະຕິບັດຕາມຂໍ້ກຳນົດໃນຂໍ້ຕົກລົງກ່ຽວກັບລະບຽບການເງິນ ແລະ ການຄຸ້ມຄອງການນຳໃຊ້ແຫຼ່ງທຶນຊ່ວຍເຫຼືອລ້າຈາກລັດຖະບານຫວຽດນາມ ມອບໃຫ້ ລັດຖະບານລາວ ທີ່ໄດ້ເຊັນໃນວັນທີ 12 ທັນວາ ປີ 2011.

2. ໃນກໍລະນີຂໍ້ຕົກລົງສະບັບນີ້ໝົດຜົນນຳໃຊ້ໄດ້, ບັນດາທຶນຊ່ວຍເຫຼືອທີ່ກຳລັງກະກຽມຫຼືໄດ້ເລີ່ມຈັດຕັ້ງປະຕິບັດຕາມການຕົກລົງຂອງພາກສ່ວນທີ່ກ່ຽວຂ້ອງຂອງສອງຝ່າຍແມ່ນໃຫ້ສືບຕໍ່ຈັດຕັ້ງປະຕິບັດຕາມແຜນ.

ເອກະສານຊ້ອນທ້າຍ I

I. ເນື້ອໃນຕົ້ນຕໍຂອງບົດວິພາກໂຄງການ :

1. ຄວາມຈຳເປັນ ແລະ ເປົ້າໝາຍການລົງທຶນ;

2. ອະທິບາຍຂະໜາດ ແລະ ຂອບເຂດຂອງໂຄງການ, ບັນດາໂຄງການຍ່ອຍ; ວິໄຈ ແລະຄັດເລືອກພື້ນຖານ ເຕັກນິກ - ເຕັກໂນໂລຊີ ແລະສະມັດຕະພາບຂອງໂຄງການ;

3. ວິທີການຈັດຕັ້ງປະຕິບັດປະກອບດ້ວຍ :

   3.1. ການຍົກຍ້າຍສິ່ງກີດຂວາງໃນພື້ນທີ່ໂຄງການ ແລະການຊົດເຊີຍ ຖ້າມີ;

   3.2. ວິທີການອອກແບບສຳລັບໂຄງການທີ່ຈັດຕັ້ງປະຕິບັດຢູ່ໃນຕົວເມືອງ ແລະໂຄງການກໍ່ສ້າງທີ່ມີ ຄວາມຮຽກຮ້ອງດ້ານສະຖາປັດຕິຍະກຳ;

   3.3. ວິທີການບຸກເບີກພື້ນທີ່ໂຄງການ ແລະ ການນຳໃຊ້ແຮງງານ;

   3.4. ວິທີການກຳນົດໄລຍະຈັດຕັ້ງປະຕິບັດ, ແຜນດຳເນີນງານ ແລະຮູບແບບການຄຸ້ມຄອງໂຄງການ.

4. ປະເມີນຜົນກະທົບຕໍ່ສິ່ງແວດລ້ອມ, ມາດຕະການປ້ອງກັນອັກຄີໄພ, ການດັບເພີງ ແລະການປ້ອງ ກັນຊາດປ້ອງກັນຄວາມສະຫງົບ;

5. ມູນຄ່າການລົງທຶນທັງໝົດຂອງໂຄງການ, ຄວາມຕ້ອງການນຳໃຊ້ທຶນຕາມຄວາມຄືບໜ້າຂອງວຽກ, ວິທີ ການ ຊຳລະໜີ້ສິນສຳລັບໂຄງການທີ່ຕ້ອງເກັບຕົ້ນທຶນຄືນ, ວິເຄາະ ແລະປະເມີນຜົນຕອບແທນດ້ານ ເສດຖະກິດ - ສັງຄົມຂອງໂຄງການ;

6. ມູນຄ່າໂຄງການທັງໝົດ ແມ່ນຄິດໄລ່ເປັນສະກຸນເງິນກີບຫວຽດນາມ, ໃນນັ້ນບັນດາລາຍຈ່າຍທີ່ເປັນເງິນ ກີບ ແມ່ນຄິດໄລ່ຕາມອັດຕາແລກປ່ຽນໃນໄລຍະສ້າງແຜນໂຄງການ. ການໃຊ້ຈ່າຍໃຫ້ແກ່ການລົງທຶນ ກໍ່ສ້າງໂຄງການຢູ່ບ່ອນໃດ ແມ່ນໃຫ້ນຳໃຊ້ຫົວໜ່ວຍລາຄາ ແລະ ຂໍ້ກຳນົດ ກ່ຽວກັບ ການຄຸ້ມຄອງລາຄາ ຢູ່ບ່ອນນັ້ນ. ກໍລະນີບໍ່ມີຫົວໜ່ວຍລາຄາແມ່ນເຈົ້າຂອງໂຄງການທັງສອງຝ່າຍ ຈະໄດ້ຕົກລົງເປັນເອກະ ພາບກັນດ້ານຫົວໜ່ວຍລາຄາ ແລະ ນຳສະເໜີລັດຖະບານສອງຝ່າຍພິຈາລະນາ;

   ຄ່າພັນທະອາກອນທີ່ຕິດພັນໃນໜ້າວຽກທີ່ຈັດຕັ້ງປະຕິບັດຢູ່ລາວ ແມ່ນລັດຖະບານລາວຮັບປະກັນ ການຊຳລະ ໂດຍນຳໃຊ້ທຶນສົມທົບ ເພື່ອຈ່າຍຄ່າພັນທະອາກອນ. ສ່ວນຄ່າພັນທະອາກອນທີ່ຕິດພັນໃນ ໜ້າວຽກທີ່ຈັດຕັ້ງປະຕິບັດຢູ່ຫງວດນາມ ແມ່ນໃຫ້ຄິດໄລ່ເຂົ້າໃນມູນຄ່າລວມຂອງໂຄງການ.

7. ຝ່າຍລາວ ສະໜອງເອກະສານ ຫົວໜ່ວຍຄິດໄລ່ກໍ່ສ້າງ, ການຄິດໄລ່ຄ່າຊົດພະຍາກອນ, ສັງຄົມ, ແຜນການພັດທະນາ ແລະບັນດາຂໍ້ກຳນົດອື່ນໆ ທີ່ຕິດພັນກັບວຽກການລົງທຶນກໍ່ສ້າງ. ຝ່າຍລາວສະ ໜ ອງບັນດາເອກະສານຂໍ້ມູນທີ່ກ່ຽວຂ້ອງກັບຫົວໜ່ວຍລາຄາ, ກຳນົດໝາຍໃນການກໍ່ສ້າງ, ຂໍ້ມູນທີ່ຈຳເປັນ ດ້ານສິ່ງແວດລ້ອມ - ສັງຄົມ, ແຜນພັດທະນາ ແລະບັນດາຂໍ້ກຳນົດອື່ນໆທີ່ກ່ຽວຂ້ອງກັບການກຳນົດມູນ ຄ່າການກໍ່ສ້າງໂຄງການ.

II. ເນື້ອໃນຕົ້ນຕໍຂອງການອອກແບບເບື້ອງຕົ້ນຂອງໂຄງການ:

1. ການອອກແບບເບື້ອງຕົ້ນ ແມ່ນການອອກແບບທີ່ຈັດຕັ້ງປະຕິບັດໃນໄລຍະດຳເນີນການກໍ່ສ້າງ ບົນພື້ນຖານການຮັບປະກັນດ້ານເຕັກນິກ ແລະ ຖືກຕ້ອງຕາມມາດຕະຖານເພື່ອເປັນບ່ອນອີງໃນການຈັດຕັ້ງປະຕິບັດຂັ້ນຕໍ່ໄປ;

2. ເນື້ອໃນການອອກແບບເບື້ອງຕົ້ນ ປະກອບມີພາກການອອກແບບເບື້ອງຕົ້ນ ແລະ ພາກການສ້າງແຜນວາດເບື້ອງຕົ້ນ :

2.1. ພາກການອອກແບບເບື້ອງຕົ້ນ :

- ສະເໜີໂດຍຫ້ຍ ກ່ຽວກັບ ສະຖານທີ່ກໍ່ສ້າງ,ການອອກແບບ; ພື້ນທີ່ລວມຂອງໂຄງການ ຫຼື ຮູບແບບແລວກິດຈະກຳ ສຳລັບໂຄງການກໍ່ສ້າງຕາມແລວ, ທີ່ຕັ້ງ, ຂະໜາດການກໍ່ສ້າງ; ການເຊື່ອມໂຍງ ລະຫວ່າງ ກິດຈະກຳຂອງໂຄງການກັບພື້ນຖານໂຄງລ່າງເຕັກນິກຂອງພື້ນທີ່;
- ຮູບແບບ ແລະລະບົບເຕັກໂນໂລຊີສຳລັບໂຄງການທີ່ມີຄວາມຮຽກຮ້ອງດ້ານເຕັກໂນໂລຊີສູງ;
- ການກຳນົດສະຖາປັດຕະຍະກຳສຳລັບໂຄງການທີ່ມີຄວາມຮຽກຮ້ອງດ້ານສະຖາປັດຕິຍະກຳສູງ;
- ກຳນົດໂຄງສ້າງຕົ້ນຕໍ, ລະບົບເຕັກນິກ, ພື້ນຖານໂຄງລ່າງເຕັກນິກຕົ້ນຕໍຂອງໂຄງການ;
- ວິທີການປ້ອງກັນສິ່ງແວດລ້ອມ, ອັກຄີໄພ,ການດັບເພີງຕາມລະບຽບກົດໝາຍຂອງສອງຝ່າຍ;
- ບັນດາຂໍ້ກຳນົດດ້ານມາດຕະຖານ ແລະ ມາດຕະຖານຕົ້ນຕໍທີ່ໄດ້ນຳໃຊ້.

2.2. ພາກການສ້າງແຜນວາດເບື້ອງຕົ້ນ:

- ແຜນວາດລວມພື້ນທີ່ໂຄງການ ຫຼື ແຜນວາດແລວທາງດຳເນີນໂຄງການສຳລັບໂຄງການທີ່ຈັດຕັ້ງປະຕິບັດເປັນແລວ;
- ແຜນວາດເຕັກໂນໂລຊີ, ແຜນວາດວົງຈອນເຕັກໂນໂລຊີສຳລັບໂຄງການທີ່ຮຽກຮ້ອງໃຫ້ມີເຕັກໂນໂລຊີ;
- ແຜນວາດດ້ານສະຖາປັດຕິຍະກຳສຳລັບໂຄງການທີ່ຮຽກຮ້ອງໃຫ້ມີສະຖາປັດຕິຍະກຳ;
- ແຜນວາດໂຄງສ້າງຕົ້ນຕໍ, ລະບົບເຕັກນິກ, ພື້ນຖານເຕັກນິກຕົ້ນຕໍຂອງໂຄງການ ແລະການເຊື່ອມໂຍງກັບພື້ນຖານໂຄງລ່າງເຕັກນິກຂອງພື້ນທີ່ໂຄງການ.

ເອກະສານຊ້ອນທ້າຍ II

---

1. ໜ້າທີ່ຂອງເຈົ້າຂອງໂຄງການຝ່າຍລາວ

1.1 ປະຕິບັດການຊິດເຊີຍ, ຍົກຍ້າຍສິ່ງກີດຂວາງໃນເຂດພື້ນທີ່ໂຄງການ, ສະໜອງໄຟຟ້າ, ນ້ຳປະປາ, ນ້ຳມັນເຊື້ອໄຟ, ວັດສະດຸກໍ່ສ້າງຕ່າງໆ ແລະວຽກງານອື່ນໆ ຕາມຄວາມສາມາດ;

1.2 ດຳເນີນການຈັດຕັ້ງປະຕິບັດໂຄງການຕາມລະບຽບກົດໝາຍຂອງ ສປປ ລາວ ໃນກໍລະນີຝ່າຍລາວເປັນຜູ້ຮັບຜິດຊອບຈັດຕັ້ງປະຕິບັດໂຄງການ;

1.3 ມີຄວາມເຫັນທີ່ເປັນເອກະພາບຕໍ່ກັບບັນດາຂໍ້ຕົກລົງ, ສັນຍາ (ຕໍ່ໄປນີ້ເອີ້ນວ່າສັນຍາ) ໃນການຈັດຕັ້ງປະຕິບັດໂຄງການ ;

1.4 ປະສານສົມທົບກັບເຈົ້າຂອງໂຄງການຝ່າຍຫວຽດນາມຈັດຕັ້ງປະຕິບັດບັນດາຂໍ້ຕົກລົງ ແລະຂໍ້ຜູກພັນສັນຍາຕ່າງໆທີ່ກ່ຽວຂ້ອງກັບການຈັດຕັ້ງປະຕິບັດໂຄງການ (ຖ້າມີ);

1.5 ປະສານສົມທົບກັບເຈົ້າຂອງໂຄງການຝ່າຍຫວຽດນາມໃນການຄຸ້ມຄອງຄຸນນະພາບ, ຈັດຕັ້ງການກວດກາ, ປະເມີນຜົນ, ຢັ້ງຢືນໝາກຜົນການຈັດຕັ້ງປະຕິບັດສອດຄ່ອງກັບເອກະສານໂຄງການ, ພ້ອມທັງສະຫຼຸບຂາດຕົວເລກມູນຄ່າການກໍ່ສ້າງທັງໝົດ; ຈັດຕັ້ງພິທີມອບ - ຮັບໂຄງການໃຫ້ພາກສ່ວນທີ່ຈະໄດ້ນຳໃຊ້ໂຄງການ;

1.6 ເຮັດວຽກຮ່ວມກັບພາກສ່ວນທີ່ກ່ຽວຂ້ອງຂອງລາວເພື່ອຈັດສັນທຶນສົມທົບໃຫ້ພຽງພໍ ແລະ ຄືບຖ້ວນຕາມທີ່ໄດ້ກຳນົດໃນພາກທີ I, ມາດຕາ 3 ຂອງຂໍ້ຕົກລົງສະບັບນີ້.

2. ໜ້າທີ່ຂອງເຈົ້າຂອງໂຄງການຝ່າຍຫວຽດນາມ

2.1 ປະສານສົມທົບກັບເຈົ້າຂອງໂຄງການຝ່າຍລາວ ຈັດຕັ້ງປະຕິບັດຜັນຂະຫຍາຍຂໍ້ຕົກລົງ ແລະ ສັນຍາ (ຖ້າມີ) ທີ່ຕິດພັນກັບການຈັດຕັ້ງປະຕິບັດໂຄງການ;

2.2 ຂຶ້ນແຜນການນຳໃຊ້ທຶນຊ່ວຍເຫຼືອທັງໝົດ ແລະ ຂຶ້ນແຜນການນຳໃຊ້ໃນແຕ່ລະປີ, ໃນນັ້ນ : ໃຫ້ແຍກການນຳໃຊ້ທຶນຊ່ວຍເຫຼືອ ແລະທຶນສົມທົບ ໂດຍໃຫ້ສອດຄ່ອງກັບການອອກແບບ, ຄວາມຄືບໜ້າຂອງການຈັດຕັ້ງປະຕິບັດໂຄງການ;

2.3 ດຳເນີນການຈັດຕັ້ງປະຕິບັດໂຄງການລວມທັງການປະມູນ, ການເຊັນສັນຍາກັບຜູ້ຮັບເໝົາ; ກວດກາໜ້າວຽກກໍ່ສ້າງທີ່ສຳເລັດຕາມສັນຍາກໍ່ສ້າງ;

2.4 ປະສານສົມທົບກັບເຈົ້າຂອງໂຄງການຝ່າຍລາວ ໃນການກວດກາໜ້າວຽກກໍ່ສ້າງ, ລາຍງານສະພາບການຈັດຕັ້ງປະຕິບັດໂຄງການຕາມຂໍ້ກຳນົດຂອງຂໍ້ຕົກລົງສະບັບນີ້;

2.5 ປະສານສົມທົບກັບເຈົ້າຂອງໂຄງການຝ່າຍລາວປະເມີນຜົນ; ມອບໂຄງການໃຫ້ເຈົ້າຂອງໂຄງການຝ່າຍລາວຄຸ້ມຄອງ, ນຳໃຊ້ ແລະດຳເນີນວຽກງານໃນໄລຍະຄ້ຳປະກັນໂຄງການຕາມການຕົກລົງຂອງສອງຝ່າຍ;

ເອກະສານຊ້ອນທ້າຍ III

ແບບຟອມເອກະສານໂຄງການສະໜັບສະໜຸນດ້ານວິຊາການ

I. ຂໍ້ມູນພື້ນຖານຂອງໂຄງການ

1. ຊື່ໂຄງການ
2. ເຈົ້າຂອງໂຄງການ
3. ໄລຍະເວລາໃນການຈັດຕັ້ງປະຕິບັດໂຄງການ
4. ສະຖານທີ່ກໍ່ສ້າງໂຄງການ

II. ຄວາມເປັນມາແລະຄວາມຈຳເປັນຂອງໂຄງການ

1. ໂຄງການຕ້ອງແທດເໝາະ ແລະ ປະກອບສ່ວນເຂົ້າໃນຍຸດທະສາດ, ແຜນພັດທະນາເສດຖະກິດ - ສັງຄົມຂອງລາວ, ການພັດທະນາຂອງຂະແໜງການ ແລະ ທ້ອງຖິ່ນ. ພ້ອມທັງ, ປະກອບສ່ວນເຂົ້າໃນສາຍພົວພັນລະຫວ່າງຫວຽດນາມ ແລະ ລາວ.
2. ຄວາມກ່ຽວພັນເຖິງແຜນງານ, ໂຄງການອື່ນ ເພື່ອສາມາດຊ່ວຍແກ້ໄຂບັນຫາທີ່ຕິດພັນໄດ້.
3. ຄວາມຈຳເປັນຂອງໂຄງການ (ນຳສະເໜີບັນຫາທີ່ຕ້ອງການແກ້ໄຂໃນຂອບເຂດຂອງໂຄງການ)

III. ຂໍ້ມູນພື້ນຖານໃນການສະເໜີຂໍນຳໃຊ້ທຶນຊ່ວຍເຫຼືອໃຫ້ແກ່ສປປລາວ

IV. ຈຸດປະສົງຂອງໂຄງການ

ນຳສະເໜີຈຸດປະສົງລວມ ແລະ ສະເພາະຂອງໂຄງການ

V. ອະທິບາຍໂຄງການ

ອົງປະກອບ,ກິດຈະກຳຫຼັກ, ປະເມີນຄວາມອາດສາມາດຕົວຈິງໃນການຈັດຕັ້ງປະຕິບັດ ແລະ ຜົນໄດ້ຮັບຕົ້ນຕໍຂອງໂຄງການໃຫ້ແກ່ຝ່າຍລາວ,.

VI. ເປົ້າໝາຍໄດ້ຮັບຜົນປະໂຫຍດຈາກໂຄງການ

ໃຫ້ລະບຸຊັດເຈນເປົ້າໝາຍທີ່ຈະໄດ້ຮັບຜົນປະໂຫຍດທາງກົງ ແລະທາງອ້ອມຈາກໂຄງການ

VII. ແຜນການປະຕິບັດ, ການຕິດຕາມແລະປະເມີນຜົນ

1. ແຜນການຂັ້ນຂະຫຍາຍບັນດາກິດຈະກຳລ່ວງໜ້າ (ຖ້າມີ)
2. ແຜນປະຕິບັດການທັງໝົດ ແລະ ແຜນການລະອຽດໃນປີທຳອິດ
3. ແຜນການຕິດຕາມ ແລະ ປະເມີນຜົນໂຄງການ

VIII. ຄຸ້ມຄອງການຈັດຕັ້ງປະຕິບັດໂຄງການ

ໃຫ້ລະບຸຊັດເຈນຮູບແບບການຄຸ້ມຄອງການຈັດຕັ້ງປະຕິບັດ, ກົນໄກການປະສານງານລະຫວ່າງທຸກພາກສ່ວນທີ່ເຂົ້າຮ່ວມກະກຽມ, ຈັດຕັ້ງປະຕິບັດແລະຄຸ້ມຄອງໂຄງການ. ພ້ອມທັງ, ຍົກໃຫ້ເຫັນຄວາມອາດໃນການຄຸ້ມຄອງການຈັດຕັ້ງປະຕິບັດໂຄງການຂອງເຈົ້າຂອງໂຄງການ.

IX. ມູນຄ່າທັງໝົດຂອງໂຄງການ:ກຳນົດມູນຄ່າທຶນໃນແຕ່ລະອົງປະກອບ, ພາກລາຍຈ່າຍຂອງໂຄງການ ປະກອບມີຈາກ : ທຶນຊ່ວຍເຫຼືອຂອງຫວຽດນາມ ແລະທຶນສົມທົບຂອງຝ່າຍລາວ.

ເອກະສານຊ້ອນທ້າຍ IV (a)

ແບບຟອມລາຍງານສະພາບການຈັດຕັ້ງປະຕິບັດໂຄງການ(6 ເດືອນ/ປີ)

I. ຂໍ້ມູນພື້ນຖານໂຄງການ

1. ຊື່ໂຄງການ
2. ເຈົ້າຂອງໂຄງການຝ່າຍຫວຽດນາມ
3. ໄລຍະໃນການຈັດຕັ້ງປະຕິບັດໂຄງການ
4. ຈຸດປະສົງໂຄງການ
5. ຜົນໄດ້ຮັບຕົ້ນຕໍ

II. ສະພາບການຈັດຕັ້ງປະຕິບັດໂຄງການ

1. ຄວາມຄືບໜ້າໃນການຈັດຕັ້ງປະຕິບັດໂຄງການ
2. ສະພາບການເບີກຖອນເງິນ (ທຶນຊ່ວຍເຫຼືອ, ທຶນສົມທົບ)

III. ປະເມີນຜົນການຈັດຕັ້ງປະຕິບັດໂຄງການ

1. ຜົນສຳເລັດທີ່ໄດ້ຮັບ
2. ບັນຫາແລະຂໍ້ຄົງຄ້າງ

IV. ຂໍ້ສະເໜີຂອງເຈົ້າຂອງໂຄງການ

V. **ເອກະສານຊ້ອນທ້າຍ** IV (b)s **ບົດລາຍງານການເບີກຖອນທຶນຊ່ວຍເຫຼືອ**

(ຫົວໜ່ວຍ: ພັນດີງຫວຽດນາມ)

ພາກສ່ວນຈັດຕັ້ງປະຕິບັດ	ຊື່ໂຄງການ	ໄລຍະເວລາໃນການຈັດຕັ້ງປະຕິບັດ	ມູນຄ່າການລົງທຶນທັງໝົດທີ່ໄດ້ຮັບການອະນຸມັດ	ຈຳນວນທຶນທັງໝົດທີ່ໄດ້ຮັບການຈັດສັນ	ສະສົມທຶນຊ່ວຍເຫລືອທີ່ຖືກຈັດສັນໃຫ້ເປັນປີ.... (ປີກ່ອນປີລາຍງານ)	ສະສົມການເບີກຈ່າຍທຶນຊ່ວຍເຫຼືອ ຮອດວັນທີ 31/12/... (ປີກ່ອນປີຂອງບົດລາຍງານ)	ການຈັດທຶນຊ່ວຍເຫຼືອໃນປີ	ປະລິມານທີ່ປະຕິບັດໄດ້ນັບແຕ່ວັນທີ 1/1/... ຮອດວັນທີ	ການເບີກຖອນນັບແຕ່ວັນທີ 1/1...ຮອດວັນທີ.....	ແຜນຄາດຄະເນປະລິມານໜ້າວຽກທີ່ຈະສຳເລັດໃນປີ..... (ລາຍງານປະຈຳປີ)	ແຜນຄາດຄະເນເບີກຈ່າຍໃນປີ ..... (ປີທີ່ລາຍງານ)	ແຜນຄາດຄະເນການເບີກຈ່າຍທຶນຊ່ວຍເຫຼືອໃນປີຕໍ່ໄປ (ປີຕໍ່ໄປຖັດຈາກປີລາຍງານ)